ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ | ເລກທີ......026....../ປປທ

ນະຄອນຫຼວງວຽງຈັນ, ວັນທີ......10 ກຸມພາ 2023......

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບ ການປະກາດໃຊ້ກົດໝາຍວ່າດ້ວຍອົງການໄອຍະການທະຫານ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 71/ສພຊ, ລົງວັນທີ 29 ທັນວາ 2022 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍອົງການໄອຍະການທະຫານ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 08/ຄປຈ, ລົງວັນທີ 27 ມັງກອນ 2023.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ ກົດໝາຍວ່າດ້ວຍອົງການໄອຍະການທະຫານ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

**ທອງລຸນ ສີສຸລິດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ເລກທີ 71 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 29 / 12 / 22

# ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍອົງການໄອຍະການທະຫານ
## (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍອົງການໄອຍະການທະຫານ (ສະບັບປັບປຸງ) ໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 15 ທັນວາ 2022 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 29 ທັນວາ 2022.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍອົງການໄອຍະການທະຫານ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 30 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 29 ທັນວາ 2022

# ກົດໝາຍ
# ວ່າດ້ວຍອົງການໄອຍະການທະຫານ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ ແລະ ການຕິດຕາມກວດກາ ຂອງອົງການໄອຍະການທະຫານ ເພື່ອຮັບປະກັນການປະຕິບັດວຽກງານໄອຍະການທະຫານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ປົກປ້ອງຜົນປະໂຫຍດຂອງກອງທັບ, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງ ນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນ, ກຳລັງສຳຮອງ ໃນເວລາປະຕິບັດໜ້າທີ່ປ້ອງກັນຊາດ, ເຮັດໃຫ້ກອງທັບ ມີ ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມໜັກແໜ້ນ, ເຂັ້ມແຂງທາງດ້ານກົດໝາຍ ແລະ ມີແບບແຜນທັນສະໄໝ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 (ປັບປຸງ) ອົງການໄອຍະການທະຫານ**

ອົງການໄອຍະການທະຫານ ແມ່ນ ອົງການທີ່ເຮັດໜ້າທີ່ຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດກົດໝາຍ ໃນທົ່ວກອງທັບ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານທະຫານ ຕາມກົດໝາຍ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພະນັກງານອົງການໄອຍະການທະຫານ** ໝາຍເຖິງ ຫົວໜ້າ, ຮອງຫົວໜ້າ, ພະນັກງານໄອຍະການທະຫານ, ຜູ້ຊ່ວຍພະນັກງານໄອຍະການທະຫານ, ພະນັກງານວິຊາການກົດໝາຍ ແລະ ພະນັກງານບໍລິຫານ;

2. **ພະນັກງານໄອຍະການທະຫານ** ໝາຍເຖິງ ນາຍທະຫານ ທີ່ໄດ້ຮັບການແຕ່ງຕັ້ງໃຫ້ປະຕິບັດໜ້າທີ່ ຕາມກົດໝາຍ ແລະ ຕາມການມອບໝາຍ ຂອງຫົວໜ້າອົງການໄອຍະການທະຫານ ໃຫ້ປະຕິບັດໜ້າທີ່ ຕິດຕາມ ກວດກາ, ສືບສວນ-ສອບສວນ ແລະ ເຂົ້າຮ່ວມປະຊຸມສານ;

3. **ຜູ້ຊ່ວຍພະນັກງານໄອຍະການທະຫານ** ໝາຍເຖິງ ນາຍທະຫານ ທີ່ໄດ້ຮັບການແຕ່ງຕັ້ງ ແລະ ມອບໝາຍ ໃຫ້ປະຕິບັດວຽກງານຊ່ວຍພະນັກງານໄອຍະການທະຫານ;

4. **ພະນັກງານວິຊາການກົດໝາຍ** ໝາຍເຖິງ ນາຍ ແລະ ພົນທະຫານ ທີ່ຮຽນຈົບກົດໝາຍ ເຂົ້າມາ ປະຈຳການຢູ່ອົງການໄອຍະການທະຫານ ແຕ່ຍັງບໍ່ໄດ້ຮັບການແຕ່ງຕັ້ງເປັນ ພະນັກງານ, ຜູ້ຊ່ວຍພະນັກງານໄອ ຍະການທະຫານ;

5. **ພະນັກງານບໍລິຫານ** ໝາຍເຖິງ ນາຍ ແລະ ພົນທະຫານ ທີ່ເຂົ້າມາປະຈຳການ ຢູ່ກົງຈັກບໍລິຫານຂອງ ອົງການໄອຍະການທະຫານ;

6. **ນາຍ ແລະ ພົນທະຫານ** ໝາຍເຖິງ ນາຍ ແລະ ພົນທະຫານ ທີ່ປະຈຳການ ແລະ ພັກຜ່ອນຮັບບຳນານ;

7. **ກຳມະກອນປ້ອງກັນຊາດ** ໝາຍເຖິງ ນາຍ ແລະ ພົນທະຫານ, ບຸກຄົນ ທີ່ເຮັດວຽກຢູ່ ໂຮງຈັກ, ໂຮງງານ ແລະ ຫົວໜ່ວຍທຸລະກິດ ຂອງກອງທັບ;

8. **ພາລະກອນປ້ອງກັນຊາດ** ໝາຍເຖິງ ບຸກຄົນທີ່ຖືກລະດົມເຂົ້າມາຮັບໃຊ້ໃນກອງທັບໃນເວລາທີ່ເຫັນ ວ່າມີຄວາມຈຳເປັນ;

9. **ກອງຫຼອນ** ໝາຍເຖິງ ກຳລັງປະກອບອາວຸດປ້ອງກັນຊາດຢູ່ຂັ້ນບ້ານ ຊຶ່ງປະຕິບັດໜ້າທີ່ປ້ອງກັນບ້ານ ຫຼື ປະສານສົມທົບກັບກຳລັງອື່ນ ເພື່ອປ້ອງກັນຂອບເຂດໃດໜຶ່ງ ຕາມການມອບໝາຍ;

10. **ກຳລັງສຳຮອງປ້ອງກັນຊາດ** ໝາຍເຖິງ ກຳລັງທີ່ບໍ່ປະຈຳການໃນກອງທັບປະຊາຊົນລາວ ໃນຍາມ ສັນຕິພາບ ຊຶ່ງນອນໃນແຜນການຈັດຕັ້ງປະກອບຂອງກອງທັບ ໃນຍາມສຸກເສີນ ແລະ ປະຕິບັດໜ້າທີ່ເປັນກອງ ໜູນ ໃຫ້ແກ່ກຳລັງປະຈຳການໃນກອງທັບ ເມື່ອມີຄວາມຕ້ອງການ;

11. **ກຳລັງປ້ອງກັນຕົວ** ໝາຍເຖິງ ພະນັກງານ, ກຳມະກອນ ທີ່ໄດ້ປະກອບອາວຸດ ຊຶ່ງໄດ້ຈັດຕັ້ງຂຶ້ນ ຢູ່ ສຳນັກງານ, ອົງການ, ໂຮງຈັກ, ໂຮງງານ, ມີໜ້າທີ່ຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນ ລະບຽບຮຽບຮ້ອຍພາຍໃນຂອບເຂດທີ່ຕັ້ງຂອງຕົນ;

12. **ນິຕິທຳ** ໝາຍເຖິງ ການເຄົາລົບ ແລະ ປະຕິບັດກົດໝາຍ ຢ່າງຖືກຕ້ອງ ແລະ ເຂັ້ມງວດ;

13. **ນິຕິກຳຂອງອົງການໄອຍະການທະຫານ** ໝາຍເຖິງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ຂອງຫົວໜ້າອົງການໄອຍະການທະຫານ;

14. **ຄຳສັ່ງຟ້ອງ** ໝາຍເຖິງ ຄຳສັ່ງຂອງຫົວໜ້າອົງການໄອຍະການທະຫານ ຊຶ່ງໄດ້ຕັ້ງຂໍ້ກ່າວຫາ ໃສ່ຜູ້ຖືກ ຫາ ເພື່ອໃຫ້ສານທະຫານພິຈາລະນາຕັດສິນ;

15. **ຄຳຖະແຫຼງ** ໝາຍເຖິງ ຄຳກ່າວຟ້ອງ ຂອງຫົວໜ້າອົງການໄອຍະການທະຫານ ທີ່ໄດ້ໄຈ້ແຍກການ ກະທຳຜິດຂອງຈຳເລີຍ ໃນທີ່ປະຊຸມສານ;

16. **ສະຖານທີ່ກັກຕົວ** ໝາຍເຖິງ ບ່ອນຄວບຄຸມຕົວຜູ້ຖືກສົງໄສ ພາຍໃນກຳນົດເວລາທີ່ກົດໝາຍໄດ້ ກຳນົດໄວ້;

17. **ສະຖານທີ່ກັກຂັງ** ໝາຍເຖິງ ບ່ອນຄຸມຂັງຜູ້ຖືກຫາ ຫຼື ຈຳເລີຍ ໃນໄລຍະດຳເນີນຄະດີກ່ອນຄຳຕັດ ສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ;

18. **ຄ້າຍຄຸມຂັງ-ດັດສ້າງ** ໝາຍເຖິງ ສະຖານທີ່ປະຕິບັດໂທດຂອງນັກໂທດ ຕາມຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານຂອງອົງການໄອຍະການທະຫານ**

ລັດ ສົ່ງເສີມ ແລະ ສ້າງເງື່ອນໄຂສະດວກໃນດ້ານຕ່າງໆ ໃຫ້ແກ່ການເຄື່ອນໄຫວປະຕິບັດໜ້າທີ່ຂອງອົງການໄອຍະການທະຫານ ດ້ວຍການວາງ ນະໂຍບາຍ, ກົດໝາຍ ແລະ ລະບຽບການ, ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈໍາເປັນ ແລະ ສ້າງໂຄງລ່າງພື້ນຖານໃຫ້ເໝາະສົມ ແນໃສ່ເຮັດໃຫ້ການຕິດຕາມກວດກາການປະຕິບັດກົດໝາຍໃນກອງທັບ ແລະ ສັ່ງຟ້ອງຜູ້ຖືກຫາ ໃຫ້ມີປະສິດທິພາບ, ປະສິດທິຜົນ, ໂປ່ງໃສ, ຍຸຕິທໍາ ແລະ ປະກອບສ່ວນໃນການຄຸ້ມຄອງກອງທັບ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ຮັບປະກັນຜົນປະໂຫຍດ ຂອງກອງທັບ, ສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງ ນາຍ ແລະ ພົນທະຫານ, ກໍາມະກອນ, ພາລະກອນປ້ອງກັນຊາດ.

ລັດ ເອົາໃຈໃສ່, ຊຸກຍູ້, ຍົກລະດັບວິຊາສະເພາະ, ໂຄສະນາ, ສຶກສາອົບຮົມກົດໝາຍ ໃຫ້ ນາຍ ແລະ ພົນທະຫານ, ກໍາມະກອນ, ພາລະກອນປ້ອງກັນຊາດ ຮັບຮູ້, ເຂົ້າໃຈ ແລະ ເຂົ້າເຖິງຂະບວນຍຸຕິທໍາ, ປະຕິບັດໃຫ້ຖືກຕ້ອງ ແລະ ເຂັ້ມງວດ ຕາມກົດໝາຍ, ປະກອບສ່ວນສ້າງກອງທັບໃຫ້ມີແບບແຜນທັນສະໄໝ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານຂອງອົງການໄອຍະການທະຫານ**

ອົງການໄອຍະການທະຫານ ເຄື່ອນໄຫວວຽກງານບົນພື້ນຖານຫຼັກການ ດັ່ງນີ້:

1. ຮັບປະກັນຫຼັກການນິຕິທໍາ ເພື່ອເພີ່ມທະວີຄວາມສັກສິດຂອງກົດໝາຍ;
2. ຮັບປະກັນການຕິດຕາມກວດກາການປະຕິບັດກົດໝາຍຢ່າງ ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ;
3. ຮັບປະກັນຄວາມຊັດເຈນ, ຍຸຕິທໍາ, ທັນເວລາ ແລະ ໂປ່ງໃສ;
4. ຮັບປະກັນການລວມສູນເປັນເອກະພາບ ຕາມສາຍຕັ້ງ, ສາຍຂວາງ ແລະ ລະບອບຫົວໜ້າ;
5. ຮັບປະກັນໃຫ້ຜູ້ກະທໍາຜິດຕ້ອງຖືກລົງໂທດຕາມກົດໝາຍ ແລະ ບໍ່ໃຫ້ຜູ້ບໍ່ໄດ້ກະທໍາຜິດຖືກລົງໂທດ;
6. ຮັບປະກັນການປະສານສົມທົບກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງໃນການປະຕິບັດວຽກງານ.

**ມາດຕາ 6 (ປັບປຸງ) ຂອບເຂດການດໍາເນີນຄະດີຂອງອົງການໄອຍະການທະຫານ**

ຂອບເຂດການດໍາເນີນຄະດີຂອງອົງການໄອຍະການທະຫານ ມີ ດັ່ງນີ້:

1. ການກະທໍາຜິດທາງອາຍາ ຂອງ ນາຍ ແລະ ພົນທະຫານ, ກໍາມະກອນປ້ອງກັນຊາດ;

2. ການກະທໍາຜິດທາງອາຍາ ຂອງ ກໍາລັງປ້ອງກັນຕົວ, ກອງຫຼອນ, ກໍາລັງສໍາຮອງ, ພາລະກອນປ້ອງກັນຊາດ ຊຶ່ງເຮັດໜ້າທີ່ໃນໄລຍະ ອົບຮົມ, ຫັດແອບ, ກຽມພ້ອມສູ້ຮົບ, ເຄື່ອນໄຫວສູ້ຮົບ ຫຼື ລາດຕະເວນ ທີ່ກອງທັບຄຸ້ມຄອງໂດຍກົງ;

3. ການກະທໍາຜິດທາງອາຍາຂອງບຸກຄົນນອກກອງທັບ ທີ່ກໍ່ຄວາມເສຍຫາຍ ຕໍ່ ຄວາມໝັ້ນຄົງຂອງຊາດ, ຄວາມລັບທາງການທະຫານ ແລະ ຕໍ່ຜົນປະໂຫຍດຂອງກອງທັບ, ຊີວິດ, ສຸຂະພາບ, ກຽດສັກສີ, ຊັບສິນ ຂອງ ນາຍ ແລະ ພົນທະຫານ.

**ມາດຕາ 7 (ປັບປຸງ) ການພິຈາລະນາຄຳຮ້ອງຟ້ອງ ແລະ ຄຳສະເໜີ**

ຫົວໜ້າອົງການໄອຍະການທະຫານ ພິຈາລະນາ ຄຳຮ້ອງຟ້ອງ ແລະ ຄຳສະເໜີ ຂອງ ບຸກຄົນ, ການຈັດຕັ້ງ, ກົມກອງ, ບັນດາຫົວໜ່ວຍທຸລະກິດ, ນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ; ວາງມາດຕະການທີ່ຈຳເປັນ ເພື່ອຟື້ນຟູສິດ ທີ່ໄດ້ຖືກລະເມີດ, ປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງບຸກຄົນ ແລະ ການຈັດຕັ້ງດັ່ງກ່າວ.

**ມາດຕາ 8 (ປັບປຸງ) ການປົກປ້ອງ**

ພະນັກງານອົງການໄອຍະການທະຫານ ລວມທັງຜູ້ເຂົ້າຮ່ວມໃນວຽກງານຕິດຕາມກວດກາ ເຊັ່ນ ຜູ້ລາຍງານ, ຜູ້ໃຫ້ຂໍ້ມູນ ຂ່າວສານ, ຫຼັກຖານ, ພະຍານ, ຜູ້ຊ່ຽວຊານ, ຜູ້ຊຳນານງານ ແລະ ຜູ້ແປພາສາ ຕ້ອງໄດ້ຮັບການປົກປ້ອງຕາມກົດໝາຍ ຈາກການບັງຄັບ, ນາບຂູ່ ແລະ ພຶດຕິກຳທີ່ເປັນອັນຕະລາຍ ຕໍ່ ຊີວິດ, ສຸຂະພາບ, ກຽດສັກສີ ຫຼື ຊັບສິນ ສ່ວນຕົວ ແລະ ຄອບຄົວ.

**ມາດຕາ 9 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ອົງການໄອຍະການທະຫານ, ອົງການສືບສວນ-ສອບສວນ ເຈົ້າໜ້າທີ່ທະຫານ ແລະ ຜູ້ເຂົ້າຮ່ວມໃນການດຳເນີນຄະດີອາຍາ ຕາມຂອບເຂດການດຳເນີນຄະດີ ທີ່ໄດ້ກຳນົດໄວ້ໃນ ມາດຕາ 6 ຂອງກົດໝາຍສະບັບນີ້.

**ມາດຕາ 10 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານໄອຍະການທະຫານ ເປັນຕົ້ນ ການຮ່ວມມືທາງດ້ານກົດໝາຍ ແລະ ຍຸຕິທຳ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ ຫຼື ສຳມະນາ, ຍົກລະດັບຄວາມຮູ້, ຄວາມສາມາດ ທາງດ້ານວິຊາການ ເພື່ອພັດທະນາວຽກງານຂອງອົງການໄອຍະການທະຫານ ໃຫ້ມີຄຸນນະພາບ, ເຂັ້ມແຂງ ແລະ ທັນສະໄໝ ລວມທັງປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ອົງການໄອຍະການທະຫານ
### ໝວດທີ 1
### ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່

**ມາດຕາ 11 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ ຂອງອົງການໄອຍະການທະຫານ**

ອົງການໄອຍະການທະຫານ ແມ່ນ ອົງການໜຶ່ງ ໃນລະບົບອົງການໄອຍະການປະຊາຊົນ ແຫ່ງ ສປປ ລາວ ທີ່ສ້າງຕັ້ງຂຶ້ນໃນກອງທັບ, ມີພາລະບົດບາດ ຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດກົດໝາຍ ຂອງ

ການຈັດຕັ້ງ, ກົມກອງ, ນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ ແລະ ຂອງບຸກຄົນນອກກອງທັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂໍ້ 3 ຂອງກົດໝາຍສະບັບນີ້ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານທະຫານ ຕາມກົດໝາຍ.

**ມາດຕາ 12 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານ**

ອົງການໄອຍະການທະຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມກວດກາການປະຕິບັດກົດໝາຍ ໃຫ້ຖືກຕ້ອງເປັນເອກະພາບ ໃນທົ່ວກອງທັບ ເອີ້ນວ່າ ການຕິດຕາມກວດກາທົ່ວໄປ;

2. ຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານ;

3. ດຳເນີນການສືບສວນ-ສອບສວນຄະດີໃດໜຶ່ງ ທັງໝົດ ຫຼື ບາງສ່ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

4. ສັ່ງຟ້ອງຜູ້ຖືກຫາຂຶ້ນສານທະຫານຕາມກົດໝາຍ;

5. ຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານທະຫານ;

6. ຕິດຕາມກວດກາການປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ຂອງສານທະຫານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;

7. ຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍຄຸມຂັງ-ດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານທະຫານ;

8. ຕິດຕາມກວດກາ ການຄົ້ນຄວ້າ, ການສະເໜີ ແລະ ການຈັດຕັ້ງປະຕິບັດ ໃຫ້ອະໄພຍະໂທດ ຕາມກົດໝາຍ ແລະ ລະບຽບການ;

9. ປະສານສົມທົບກັບ ອົງການສືບສວນ-ສອບສວນ ແລະ ອົງການອື່ນທີ່ກ່ຽວຂ້ອງ ດຳເນີນການສະກັດກັ້ນ, ຕ້ານອາຊະຍາກຳ ຫຼື ການກະທຳຜິດ ແລະ ການລະເມີດກົດໝາຍ ພ້ອມທັງລົບລ້າງບັນດາສາເຫດ ແລະ ເງື່ອນໄຂທີ່ພາໃຫ້ການກະທຳຜິດເກີດຂຶ້ນ;

10. ສະເໜີຂໍຮື້ຟື້ນຄະດີ ຕໍ່ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕາມກົດໝາຍ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ລະບົບການຈັດຕັ້ງຂອງອົງການໄອຍະການທະຫານ

**ມາດຕາ 13 (ປັບປຸງ) ລະບົບການຈັດຕັ້ງຂອງອົງການໄອຍະການທະຫານ**

ລະບົບການຈັດຕັ້ງຂອງອົງການໄອຍະການທະຫານ ປະກອບດ້ວຍ:

1. ອົງການໄອຍະການທະຫານຂັ້ນສູງ;

2. ອົງການໄອຍະການທະຫານພາກ;

3. ອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ.

**ມາດຕາ 14 (ປັບປຸງ) ອົງການໄອຍະການທະຫານຂັ້ນສູງ**

ອົງການໄອຍະການທະຫານຂັ້ນສູງ ແມ່ນ ອົງການຕິດຕາມກວດກາສູງສຸດ ຂອງລະບົບການຈັດຕັ້ງຂອງອົງການໄອຍະການທະຫານ, ມີພາລະບົດບາດ ນໍາພາ ຊີ້ນໍາ ອົງການໄອຍະການທະຫານຂັ້ນລຸ່ມ ໃນການຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນທົ່ວກອງທັບ.

**ມາດຕາ 15 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານຂັ້ນສູງ**

ອົງການໄອຍະການທະຫານຂັ້ນສູງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມກວດກາການປະຕິບັດກົດໝາຍໃນທົ່ວກອງທັບ;

2. ຕິດຕາມກວດກາການນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງອົງການໄອຍະການທະຫານຂັ້ນລຸ່ມ;

3. ດໍາເນີນຄະດີ ເປັນຂັ້ນອຸທອນ, ຂັ້ນລົບລ້າງ ແລະ ນໍາສະເໜີ ຄໍາຮ້ອງຂໍຮື້ຟື້ນຄະດີ ຕໍ່ອົງການໄອຍະການປະຊາຊົນສູງສຸດ;

4. ສະເໜີ ຄັດຄ້ານ ຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ແລະ ຄໍາພິພາກສາ ຂອງສານທະຫານຂັ້ນສູງ ແລະ ສານທະຫານພາກ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

5. ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງອົງການໄອຍະການທະຫານຂັ້ນລຸ່ມ;

6. ສ້າງແຜນ ບໍາລຸງ ແລະ ຍົກລະດັບພະນັກງານອົງການໄອຍະການທະຫານ;

7. ຄົ້ນຄວ້າ ແລະ ສັງລວມການລາຍງານ ກ່ຽວກັບການເຄື່ອນໄຫວວຽກງານຂອງອົງການໄອຍະການທະຫານ, ວຽກງານສະຖິຕິຄະດີ, ຜູ້ຖືກຫາ ແລະ ນັກໂທດໃນທົ່ວກອງທັບ;

8. ແນະນໍາ ແລະ ສະໜອງ ຂໍ້ມູນ ຂ່າວສານ ທາງດ້ານກົດໝາຍໃຫ້ອົງການໄອຍະການທະຫານຂັ້ນລຸ່ມ;

9. ຄົ້ນຄວ້າ, ສະເໜີ ຕໍ່ຄະນະກໍາມະການອະໄພຍະໂທດທີ່ກ່ຽວຂ້ອງ ກ່ຽວກັບການໃຫ້ອະໄພຍະໂທດດ້ວຍການຜ່ອນໂທດ ແລະ ປ່ອຍຕົວນັກໂທດໃນກອງທັບ ຕາມກົດໝາຍ;

10. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການນໍາໃຊ້ ສິດ ແລະ ປະຕິບັດໜ້າທີ່ຂອງຕົນ;

11. ພົວພັນ, ແລກປ່ຽນບົດຮຽນ ກ່ຽວກັບວຽກງານຂອງອົງການໄອຍະການທະຫານ ແລະ ວຽກງານຍຸຕິທໍາ ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ຕາມການຕົກລົງເຫັນດີຂອງຂັ້ນເທິງ;

12. ສະຫຼຸບ, ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຂອງຕົນ ຕໍ່ອົງການໄອຍະການປະຊາຊົນສູງສຸດ ແລະ ກະຊວງປ້ອງກັນປະເທດ ຢ່າງເປັນປົກກະຕິ;

13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 16 ອົງການໄອຍະການທະຫານພາກ**

ອົງການໄອຍະການທະຫານພາກ ແມ່ນ ອົງການໜຶ່ງ ໃນລະບົບການຈັດຕັ້ງຂອງອົງການໄອຍະການທະຫານ, ມີພາລະບົດບາດ ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນຂອບເຂດຄວາມຮັບຜິດຊອບຂອງຕົນ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານທະຫານພາກ.

ອົງການໄອຍະການທະຫານພາກ ຕັ້ງຢູ່ ພາກເໜືອ, ພາກກາງ ແລະ ພາກໃຕ້ ຂອງ ສປປ ລາວ.

### ມາດຕາ 17 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານພາກ

ອົງການໄອຍະການທະຫານພາກ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມກວດກາການປະຕິບັດກົດໝາຍ;

2. ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ;

3. ຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ທະຫານ;

4. ດຳເນີນຄະດີ ເປັນຂັ້ນຕົ້ນ ແລະ ເປັນຂັ້ນອຸທອນ;

5. ສະເໜີຄັດຄ້ານ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ທີ່ບໍ່ຖືກຕ້ອງ ຂອງສານທະຫານພາກ ແລະ ສານທະຫານ ແຂວງ, ນະຄອນຫຼວງ;

6. ຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີ ແລະ ການປະຕິບັດຄຳຕັດສິນຂອງສານທະຫານພາກ;

7. ຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍຄຸມຂັງ-ດັດສ້າງ ໃນເວລາປະຕິບັດໂທດຕັດອິດສະລະພາບ ແລະ ມາດຕະການບັງຄັບອື່ນ ຂອງສານທະຫານພາກ;

8. ແນະນຳ, ຊີ້ນຳ ແລະ ອະທິບາຍ ບັນຫາທາງດ້ານກົດໝາຍ, ການດຳເນີນຄະດີ ໃຫ້ແກ່ອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ;

9. ຄົ້ນຄວ້າ ແລະ ສັງລວມການປະຕິບັດວຽກງານ ຂອງອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ, ວຽກງານສະຖິຕິຄະດີ, ຜູ້ຖືກຫາ ແລະ ນັກໂທດ;

10. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນ;

11. ສະຫຼຸບ, ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຂອງຕົນຕໍ່ອົງການໄອຍະການທະຫານຂັ້ນສູງຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 18 (ໃໝ່) ອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ

ອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ ແມ່ນ ອົງການໜຶ່ງ ໃນລະບົບການຈັດຕັ້ງຂອງອົງການໄອຍະການທະຫານ, ມີພາລະບົດບາດຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍຂອງກຳລັງຫຼວງ ແລະ ກຳລັງທ້ອງຖິ່ນ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ຖືກຕ້ອງ, ເປັນເອກະພາບ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານທະຫານ ແຂວງ, ນະຄອນຫຼວງ.

### ມາດຕາ 19 (ໃໝ່) ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ

ອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມກວດກາການປະຕິບັດກົດໝາຍ;

2. ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕົນ;

3. ຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ທະຫານ;

4. ດຳເນີນຄະດີອາຍາເປັນຂັ້ນຕົ້ນ;

5. ສະເໜີຄັດຄ້ານ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ທີ່ບໍ່ຖືກຕ້ອງ ຂອງສານທະຫານ ແຂວງ, ນະຄອນຫຼວງ;

6. ຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີ ແລະ ການປະຕິບັດຄຳຕັດສິນຂອງສານທະຫານ ແຂວງ, ນະຄອນຫຼວງ;

7. ຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍຄຸມຂັງ-ດັດສ້າງ ໃນເວລາປະຕິບັດໂທດຕັດອິດສະລະພາບ ແລະ ມາດຕະການບັງຄັບອື່ນ ຂອງສານທະຫານ ແຂວງ, ນະຄອນຫຼວງ;

8. ຄົ້ນຄວ້າ ແລະ ສັງລວມ ການຈັດຕັ້ງປະຕິບັດວຽກງານ ເກັບກຳ ສະຖິຕິຄະດີ, ຜູ້ຖືກຫາ ແລະ ນັກໂທດ;

9. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນ;

10. ສະຫຼຸບ, ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຂອງຕົນຕໍ່ອົງການໄອຍະການທະຫານພາກຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

### ມາດຕາ 20 (ປັບປຸງ) ໂຄງປະກອບການຈັດຕັ້ງ

ອົງການໄອຍະການທະຫານ ມີ ໂຄງປະກອບການຈັດຕັ້ງ ດັ່ງນີ້:

1. ອົງການໄອຍະການທະຫານຂັ້ນສູງ ມີ ຄະນະກຳມະການໄອຍະການທະຫານຂັ້ນສູງ, ຫ້ອງ ແລະ ພະແນກ;

2. ອົງການໄອຍະການທະຫານພາກ ມີ ຫ້ອງການ ແລະ ພະແນກ;

3. ອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ ມີ ຫ້ອງການ ແລະ ພະແນກ.

### ມາດຕາ 21 (ໃໝ່) ຄະນະກຳມະການໄອຍະການທະຫານຂັ້ນສູງ

ຄະນະກຳມະການໄອຍະການທະຫານຂັ້ນສູງ ແມ່ນ ການຈັດຕັ້ງຂອງອົງການໄອຍະການທະຫານຂັ້ນສູງ, ມີພາລະບົດບາດ ຕົກລົງບັນຫາທີ່ມີຄວາມສຳຄັນ ແລະ ມີລັກສະນະຍຸດທະສາດ ກ່ຽວກັບວຽກງານຂອງອົງການໄອຍະການທະຫານ ເພື່ອຮັບປະກັນໃຫ້ລະບົບການຈັດຕັ້ງຂອງອົງການໄອຍະການທະຫານ ເຄື່ອນໄຫວຢ່າງມີປະສິດທິພາບ.

ຄະນະກຳມະການໄອຍະການທະຫານຂັ້ນສູງ ປະກອບດ້ວຍ ຫົວໜ້າອົງການໄອຍະການທະຫານຂັ້ນສູງ ເປັນປະທານ, ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ ເປັນຮອງປະທານ, ຫົວໜ້າຫ້ອງ ແລະ ຫົວໜ້າອົງການໄອຍະການທະຫານພາກ ເປັນກຳມະການ ໂດຍແມ່ນ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ແຕ່ງຕັ້ງ ຕາມການສະເໜີຂອງລັດຖະມົນຕີກະຊວງປ້ອງກັນປະເທດ.

ຄະນະກຳມະການໄອຍະການທະຫານຂັ້ນສູງ ມີສະມາຊິກບໍ່ໃຫ້ເກີນ ສິບເອັດຄົນ.

ຄະນະກຳມະການໄອຍະການທະຫານຂັ້ນສູງ ເຄື່ອນໄຫວວຽກງານຂອງຕົນ ດ້ວຍການເປີດກອງປະຊຸມຢ່າງໜ້ອຍ ສາມເດືອນ ຕໍ່ເທື່ອ ຕາມການຮຽກໂຮມ ຂອງປະທານຄະນະກຳມະການໄອຍະການທະຫານຂັ້ນສູງ.

ມະຕິກອງປະຊຸມ ຂອງຄະນະກຳມະການໄອຍະການທະຫານຂັ້ນສູງ ຖືເອົາຕາມສຽງສ່ວນຫຼາຍ, ໃນກໍລະນີມີຄະແນນສຽງເທົ່າກັນ ໃຫ້ຖືເອົາຄຳເຫັນຂອງປະທານຄະນະກຳມະການໄອຍະການທະຫານຂັ້ນສູງ ເປັນອັນຊີ້ຂາດ.

## ມາດຕາ 22 (ໃໝ່) ສິດ ແລະ ໜ້າທີ່ ຂອງຄະນະກຳມະການໄອຍະການທະຫານຂັ້ນສູງ

ຄະນະກຳມະການໄອຍະການທະຫານຂັ້ນສູງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕົກລົງ ຮັບຮອງເອົາແຜນພັດທະນາ ວຽກງານຂອງອົງການໄອຍະການທະຫານ;
2. ຄົ້ນຄວ້າ ແລະ ໃຫ້ຄຳເຫັນ ຕໍ່ຮ່າງກົດໝາຍ ກ່ຽວກັບວຽກງານຂອງອົງການໄອຍະການທະຫານ;
3. ຄົ້ນຄວ້າ ແລະ ໃຫ້ຄຳເຫັນ ຕໍ່ຄຳຕັດສິນ ຫຼື ຄຳພິພາກສາ ປະຫານຊີວິດ ທີ່ໃຊ້ໄດ້ຢ່າງເດັດຂາດ ເພື່ອສະເໜີຕໍ່ອົງການໄອຍະການປະຊາຊົນສູງສຸດ;
4. ຄົ້ນຄວ້າ ແລະ ໃຫ້ຄຳເຫັນ ຕໍ່ຄະດີຂັ້ນລົບລ້າງ ຕາມການສະເໜີ ຂອງຫົວໜ້າອົງການໄອຍະການທະຫານຂັ້ນສູງ;
5. ຄົ້ນຄວ້າ ແລະ ໃຫ້ຄຳເຫັນ ຕໍ່ການ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ພະນັກງານອົງການໄອຍະການທະຫານ;
6. ຄົ້ນຄວ້າ ແລະ ໃຫ້ຄຳເຫັນ ຕໍ່ການສ້າງຕັ້ງ ຫຼື ຍຸບເລີກກົງຈັກການຈັດຕັ້ງ ຂອງອົງການໄອຍະການທະຫານ;
7. ຄົ້ນຄວ້າ ແລະ ໃຫ້ຄຳເຫັນ ຕໍ່ແຜນການ, ງົບປະມານປະຈຳປີ ຂອງອົງການໄອຍະການທະຫານ;
8. ຄົ້ນຄວ້າ ແລະ ໃຫ້ຄຳເຫັນ ກ່ຽວກັບວຽກງານພັກ-ວຽກງານການເມືອງ, ວຽກງານນະໂຍບາຍ ແລະ ວຽກງານອື່ນ ທີ່ຫົວໜ້າອົງການໄອຍະການທະຫານຂັ້ນສູງ ເຫັນວ່າມີຄວາມຈຳເປັນ.

ສຳລັບ ສິດ ແລະ ໜ້າທີ່ຂອງ ຫ້ອງ, ພະແນກ ຂອງອົງການໄອຍະການທະຫານຂັ້ນສູງ, ຫ້ອງການ ແລະ ພະແນກ ຂອງອົງການໄອຍະການທະຫານ ພາກ, ແຂວງ, ນະຄອນຫຼວງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ມາດຕາ 23 (ປັບປຸງ) ໂຄງປະກອບບຸກຄະລາກອນ

ອົງການໄອຍະການທະຫານ ປະກອບດ້ວຍບຸກຄະລາກອນ ດັ່ງນີ້:

1. ຫົວໜ້າ ແລະ ຮອງຫົວໜ້າ ອົງການໄອຍະການທະຫານຂັ້ນສູງ;
2. ຫົວໜ້າ ແລະ ຮອງຫົວໜ້າ ອົງການໄອຍະການທະຫານພາກ;
3. ຫົວໜ້າ ແລະ ຮອງຫົວໜ້າ ອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ;
4. ພະນັກງານໄອຍະການທະຫານ, ຜູ້ຊ່ວຍພະນັກງານໄອຍະການທະຫານ.

ນອກຈາກນີ້ ອົງການໄອຍະການທະຫານແຕ່ລະຂັ້ນ ຍັງມີບັນດາ ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງ, ຫ້ອງການ ແລະ ພະແນກ, ພະນັກງານວິຊາການກົດໝາຍ ແລະ ພະນັກງານບໍລິຫານ ຊຶ່ງມີ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 24 (ປັບປຸງ) ມາດຕະຖານ ຂອງຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານໄອຍະການທະຫານ**

ຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານໄອຍະການທະຫານ ຕ້ອງມີມາດຕະຖານ ດັ່ງນີ້:

1. ເປັນພົນລະເມືອງລາວ, ມີຊີວະປະຫວັດຈະແຈ້ງ, ເປັນນາຍທະຫານແຕ່ຊັ້ນ ຮ້ອຍເອກ ແລະ ມີອາຍຸແຕ່ ຊາວຫ້າປີ ຂຶ້ນໄປ;

2. ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສົມທຳປະຕິວັດ, ມີຈັນຍາບັນ, ຈັນຍາທຳ, ມີແບບແຜນການນຳພາ-ບັນຊາດີ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ ແລະ ຮັບໃຊ້ຜົນປະໂຫຍດຂອງກອງທັບ;

3. ມີລະດັບວິຊາສະເພາະດ້ານກົດໝາຍຊັ້ນສູງຂຶ້ນໄປ, ຜ່ານການຝຶກອົບຮົມວຽກງານໄອຍະການ, ຮຽນວິຊາການທະຫານ ແລະ ບຳລຸງທິດສະດີການເມືອງ ຂັ້ນຕົ້ນຂຶ້ນໄປ;

4. ບໍ່ເຄີຍ ຖືກລົງວິໄນ ຫຼື ຖືກລົງໂທດຕັດອິດສະລະພາບ ໃນການກະທຳຜິດໂດຍເຈດຕະນາ;

5. ມີສຸຂະພາບດີ.

**ມາດຕາ 25 (ປັບປຸງ) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ**

ຫົວໜ້າອົງການໄອຍະການທະຫານຂັ້ນສູງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດ ຕາມການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ພາຍຫຼັງໄດ້ຮັບການເຫັນດີຈາກລັດຖະມົນຕີກະຊວງປ້ອງກັນປະເທດ.

ຫົວໜ້າອົງການໄອຍະການທະຫານຂັ້ນສູງ ເປັນຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ, ຫົວໜ້າ ແລະ ຮອງຫົວໜ້າ ອົງການໄອຍະການທະຫານພາກ, ຫົວໜ້າ ແລະ ຮອງຫົວໜ້າ ອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕາມການສະເໜີຂອງຫົວໜ້າອົງການໄອຍະການທະຫານຂັ້ນສູງ ພາຍຫຼັງໄດ້ຮັບການເຫັນດີຈາກລັດຖະມົນຕີກະຊວງປ້ອງກັນປະເທດ.

ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງ, ຫ້ອງການ, ພະແນກ ຂອງອົງການໄອຍະການທະຫານແຕ່ລະຂັ້ນ ຖືກ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງປ້ອງກັນປະເທດ ຕາມການສະເໜີຂອງຫົວໜ້າອົງການໄອຍະການທະຫານຂັ້ນສູງ.

ພະນັກງານໄອຍະການທະຫານ ແລະ ຜູ້ຊ່ວຍພະນັກງານໄອຍະການທະຫານ ຖືກແຕ່ງຕັ້ງ ຫຼື ປົດຂັ້ນ ໂດຍຫົວໜ້າອົງການໄອຍະການທະຫານຂັ້ນສູງ.

**ມາດຕາ 26 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫົວໜ້າອົງການໄອຍະການທະຫານຂັ້ນສູງ**

ຫົວໜ້າອົງການໄອຍະການທະຫານຂັ້ນສູງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳພາ ຊີ້ນຳ ການຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດກົດໝາຍ ໃນທົ່ວກອງທັບ;
2. ນຳພາ ຊີ້ນຳ ແລະ ກວດກາການປະຕິບັດວຽກງານ ຂອງພະນັກງານອົງການໄອຍະການທະຫານ;
3. ລົບລ້າງຄຳສັ່ງທີ່ບໍ່ຖືກຕ້ອງ ຂອງຫົວໜ້າອົງການໄອຍະການທະຫານຂັ້ນລຸ່ມ;

4. ກວດກາສຳນວນຄະດີ ເປັນຂັ້ນອຸທອນ ແລະ ຂັ້ນລຶບລ້າງ, ໃຫ້ຄຳເຫັນຕໍ່ການດຳເນີນຄະດີຂອງອົງການໄອຍະການທະຫານຂັ້ນລຸ່ມ;

5. ອອກ ຄຳຕິກລົງ, ຄຳຖະແຫຼງ ກ່ຽວກັບຄະດີຕໍ່ສານທະຫານຂັ້ນສູງ;

6. ສະເໜີຄັດຄ້ານ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ທີ່ບໍ່ຖືກຕ້ອງຂອງສານທະຫານຂັ້ນສູງ ແລະ ສານທະຫານພາກ;

7. ສະເໜີຂໍຮື້ຟື້ນຄະດີຕໍ່ອົງການໄອຍະການປະຊາຊົນສູງສຸດ;

8. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ນິຕິກຳອື່ນ ຕາມຂອບເຂດສິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

9. ສະເໜີ ສ້າງຕັ້ງ ຫຼື ຍຸບເລີກ ອົງການໄອຍະການທະຫານຂັ້ນລຸ່ມ ຕໍ່ກະຊວງປ້ອງກັນປະເທດເພື່ອພິຈາລະນາ;

10. ສະເໜີຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ, ຫົວໜ້າ ແລະ ຮອງຫົວໜ້າ ອົງການໄອຍະການທະຫານພາກ, ຫົວໜ້າ ແລະ ຮອງຫົວໜ້າ ອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ;

11. ສະເໜີລັດຖະມົນຕີກະຊວງປ້ອງກັນປະເທດ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງ, ຫ້ອງການ, ພະແນກ ຂອງອົງການໄອຍະການທະຫານແຕ່ລະຂັ້ນ;

12. ແຕ່ງຕັ້ງ ຫຼື ປົດຂັ້ນ ພະນັກງານໄອຍະການທະຫານ ແລະ ຜູ້ຊ່ວຍພະນັກງານໄອຍະການທະຫານ;

13. ຮຽກໂຮມ ແລະ ເປັນປະທານກອງປະຊຸມວິຊາການ ຂອງອົງການໄອຍະການທະຫານ, ກອງປະຊຸມປະຈຳປີ ຂອງອົງການໄອຍະການທະຫານທົ່ວກອງທັບ ແລະ ກອງປະຊຸມຄະນະກຳມະການໄອຍະການທະຫານ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 27 (ປັບປຸງ) ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ**

ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ ມີໜ້າທີ່ຊ່ວຍຫົວໜ້າອົງການໄອຍະການທະຫານຂັ້ນສູງ ໃນການປະຕິບັດໜ້າທີ່ ແລະ ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງຫົວໜ້າອົງການໄອຍະການທະຫານຂັ້ນສູງ.

ໃນກໍລະນີ ຫົວໜ້າອົງການໄອຍະການທະຫານຂັ້ນສູງ ຕິດຂັດ ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງທີ່ໄດ້ຮັບມອບໝາຍ ເປັນຜູ້ຮັກສາການແທນ.

**ມາດຕາ 28 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫົວໜ້າອົງການໄອຍະການທະຫານພາກ**

ຫົວໜ້າອົງການໄອຍະການທະຫານພາກ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ນຳພາ ຊີ້ນຳ ການຕິດຕາມກວດກາການປະຕິບັດກົດໝາຍ;

2. ນຳພາ ຊີ້ນຳ ແລະ ກວດກາການຈັດຕັ້ງປະຕິບັດວຽກງານ ຂອງອົງການໄອຍະການທະຫານພາກ ແລະ ອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ;

3. ນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

4. ສັ່ງຟ້ອງຜູ້ຖືກຫາ, ອອກຄຳຖະແຫຼງ ກ່ຽວກັບຄະດີ ຕໍ່ສານທະຫານພາກ ເປັນຂັ້ນຕົ້ນ ແລະ ຂັ້ນອຸທອນ;

5. ສະເໜີຄັດຄ້ານ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຂອງສານທະຫານ ແຂວງ, ນະຄອນຫຼວງ ແລະ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ຂອງສານທະຫານພາກ ທີ່ບໍ່ຖືກຕ້ອງ ຕໍ່ສານທະຫານຂັ້ນສູງ;

6. ແນະນຳດ້ານວິຊາການ ໃຫ້ແກ່ອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 29 (ປັບປຸງ) ຮອງຫົວໜ້າອົງການໄອຍະການທະຫານພາກ**

ຮອງຫົວໜ້າອົງການໄອຍະການທະຫານພາກ ມີໜ້າທີ່ຊ່ວຍຫົວໜ້າອົງການໄອຍະການທະຫານພາກ ໃນການປະຕິບັດໜ້າທີ່ ແລະ ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງຫົວໜ້າອົງການໄອຍະການທະຫານພາກ.

ໃນກໍລະນີ ຫົວໜ້າອົງການໄອຍະການທະຫານພາກ ຕິດຂັດ ຮອງຫົວໜ້າອົງການໄອຍະການທະຫານພາກທີ່ໄດ້ຮັບການມອບໝາຍ ເປັນຜູ້ຮັກສາການແທນ.

**ມາດຕາ 30 (ໃໝ່) ສິດ ແລະ ໜ້າທີ່ ຂອງຫົວໜ້າອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ**

ຫົວໜ້າອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ນຳພາ ຊີ້ນຳ ການຕິດຕາມກວດກາການປະຕິບັດກົດໝາຍ;

2. ນຳພາ ຊີ້ນຳ ແລະ ກວດກາການຈັດຕັ້ງປະຕິບັດວຽກງານ ຂອງອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ;

3. ນຳໃຊ້ ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

4. ສັ່ງຟ້ອງຜູ້ຖືກຫາ ແລະ ຖະແຫຼງ ຕໍ່ສານທະຫານ ແຂວງ, ນະຄອນຫຼວງ;

5. ສະເໜີຄັດຄ້ານ ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕັດສິນ ທີ່ບໍ່ຖືກຕ້ອງຂອງສານທະຫານ ແຂວງ, ນະຄອນຫຼວງ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 31 (ໃໝ່) ຮອງຫົວໜ້າອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ**

ຮອງຫົວໜ້າອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ ມີໜ້າທີ່ຊ່ວຍຫົວໜ້າອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ ໃນການປະຕິບັດໜ້າທີ່ ແລະ ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງຫົວໜ້າອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ.

ໃນກໍລະນີ ຫົວໜ້າອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ ຕິດຂັດ ຮອງຫົວໜ້າອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ ທີ່ໄດ້ຮັບມອບໝາຍ ເປັນຜູ້ຮັກສາການແທນ.

**ມາດຕາ 32 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະນັກງານໄອຍະການທະຫານ**

ພະນັກງານໄອຍະການທະຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ດຳເນີນການສືບສວນ-ສອບສວນຄະດີ;

2. ເອົາຄຳໃຫ້ການຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ;

3. ເກັບກຳຂໍ້ມູນຫຼັກຖານ ກ່ຽວກັບຄະດີ, ເຂົ້າຮ່ວມການດຳເນີນຄະດີນຳເຈົ້າໜ້າທີ່ສືບສວນ-ສອບສວນທະຫານ ແລະ ເຈົ້າໜ້າທີ່ອື່ນ;

4. ຄົ້ນຄວ້າ, ສະຫຼຸບ ສຳນວນຄະດີ, ຮ່າງຄຳສັ່ງຟ້ອງ, ຮ່າງຄຳຖະແຫຼງ ຫຼື ຄຳຕິກລົງ ຂອງຫົວໜ້າອົງການໄອຍະການທະຫານ;

5. ສະເໜີນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ຕໍ່ຫົວໜ້າອົງການໄອຍະການທະຫານ;

6. ເຂົ້າຮ່ວມປະຊຸມສານ ຕາມການມອບໝາຍຂອງຫົວໜ້າອົງການໄອຍະການທະຫານ;

7. ຕິດຕາມກວດກາການປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ຂອງສານທະຫານ;

8. ຕິດຕາມກວດກາ ສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍຄຸມຂັງ-ດັດສ້າງ;

9. ໄດ້ຮັບການບຳລຸງ ຍົກລະດັບ ກ່ຽວກັບວຽກງານໄອຍະການ ແລະ ວຽກງານວິຊາການກົດໝາຍ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 33 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຜູ້ຊ່ວຍພະນັກງານໄອຍະການທະຫານ**

ຜູ້ຊ່ວຍພະນັກງານໄອຍະການທະຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ບັນທຶກຄຳໃຫ້ການຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ;

2. ຊ່ວຍຄົ້ນຄວ້າ, ສະຫຼຸບ ສຳນວນຄະດີ ແລະ ຮ່າງຄຳຖະແຫຼງ ຂອງຫົວໜ້າອົງການໄອຍະການທະຫານ;

3. ໃສ່ເລກທີຄະດີ, ຈັດສຳເນົາຄະດີ, ເກັບມ້ຽນ ແລະ ເຮັດສະຖິຕິຄະດີ;

4. ຂຶ້ນບັນຊີ, ເກັບກຳສະຖິຕິຜູ້ຖືກຫາ ແລະ ນັກໂທດ;

5. ຂຶ້ນບັນຊີເອກະສານ ແລະ ຕິດຕາມການເກັບມ້ຽນຂອງກາງຄະດີ;

6. ເຮັດໝາຍຮຽກ ແລະ ໝາຍເຊີນ;

7. ໄດ້ຮັບການຍົກລະດັບ ກ່ຽວກັບວຽກງານໄອຍະການ ແລະ ວຽກງານວິຊາການກົດໝາຍ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ III
## ການເຄື່ອນໄຫວຂອງອົງການໄອຍະການທະຫານ
### ໝວດທີ 1
### ການຕິດຕາມກວດກາທົ່ວໄປ

**ມາດຕາ 34 (ປັບປຸງ) ການຕິດຕາມກວດກາທົ່ວໄປ**

ການຕິດຕາມກວດກາທົ່ວໄປ ແມ່ນ ການຕິດຕາມກວດກາການປະຕິບັດກົດໝາຍ ຂອງບັນດາການຈັດຕັ້ງ, ກົມກອງ, ຫົວໜ່ວຍທຸລະກິດຂອງກອງທັບ, ນາຍ ແລະ ພົນທະຫານ, ກໍາມະກອນ, ພາລະກອນປ້ອງກັນຊາດ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ, ສະກັດກັ້ນ ແລະ ຕ້ານອາຊະຍາກໍາ, ຕິດຕາມກວດກາການອອກນິຕິກໍາຂອງການຈັດຕັ້ງດັ່ງກ່າວ ເພື່ອໃຫ້ສອດຄ່ອງກັບກົດໝາຍ.

**ມາດຕາ 35 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານໃນການຕິດຕາມກວດກາທົ່ວໄປ**

ໃນການຕິດຕາມກວດກາທົ່ວໄປ ອົງການໄອຍະການທະຫານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມກວດກາການປະຕິບັດກົດໝາຍ ຂອງການຈັດຕັ້ງ, ກົມກອງ, ຫົວໜ່ວຍທຸລະກິດຂອງກອງທັບ ແລະ ນິຕິກໍາ ຂອງພາກສ່ວນດັ່ງກ່າວ ໂດຍໜ້າທີ່ ຫຼື ຕາມຄໍາສະເໜີ, ຄໍາຮ້ອງຟ້ອງ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ; ຖ້າເຫັນວ່າມີການລະເມີດກົດໝາຍ ຕ້ອງສະເໜີການຈັດຕັ້ງທີ່ກ່ຽວຂ້ອງ ພິຈາລະນາ ແລະ ແກ້ໄຂ. ໃນກໍລະນີການລະເມີດນັ້ນ ຫາກເປັນການກະທໍາຜິດທາງອາຍາ ຫົວໜ້າອົງການໄອຍະການທະຫານ ຕ້ອງນໍາມາດໍາເນີນຄະດີຕາມກົດໝາຍ;

2. ທວງເອົານິຕິກໍາ ຂອງການຈັດຕັ້ງ, ກົມກອງ ແລະ ເຊີນບຸກຄົນ ຫຼື ຜູ້ຕາງໜ້າການຈັດຕັ້ງທີ່ກ່ຽວຂ້ອງມາອະທິບາຍກ່ຽວກັບການລະເມີດກົດໝາຍ;

3. ສະເໜີ ໂຈະ ຫຼື ລຶບລ້າງ ນິຕິກໍາ ຂອງການຈັດຕັ້ງ, ກົມກອງ, ຫົວໜ່ວຍທຸລະກິດຂອງກອງທັບທີ່ບໍ່ສອດຄ່ອງກັບກົດໝາຍ ຕໍ່ການຈັດຕັ້ງດັ່ງກ່າວ ຫຼື ຕໍ່ການຈັດຕັ້ງຂັ້ນເທິງທີ່ກ່ຽວຂ້ອງ;

4. ເກັບກໍາສະຖິຕິອາຊະຍາກໍາ, ຄົ້ນຄວ້າ, ວິເຄາະ, ວິໄຈ ສາເຫດທີ່ພາໃຫ້ເກີດອາຊະຍາກໍາໃນກອງທັບ, ວາງມາດຕະການ ຕ້ານ ແລະ ສະກັດກັ້ນອາຊະຍາກໍາ;

5. ສະເໜີກະຊວງປ້ອງກັນປະເທດ ກ່ຽວກັບການຈໍາກັດ ແລະ ລຶບລ້າງ ການລະເມີດກົດໝາຍ, ສາເຫດ ແລະ ເງື່ອນໄຂ ທີ່ພາໃຫ້ການກະທໍາຜິດເກີດຂຶ້ນ;

6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 36 (ປັບປຸງ) ຜົນບັງຄັບປະຕິບັດນິຕິກໍາຂອງອົງການໄອຍະການທະຫານ**

ນິຕິກໍາຂອງອົງການໄອຍະການທະຫານທຸກຂັ້ນ ທີ່ວາງອອກໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນ ທີ່ຖືກຕ້ອງຕາມກົດໝາຍ ມີຜົນບັງຄັບປະຕິບັດ ສໍາລັບການຈັດຕັ້ງຂອງກອງທັບ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ.

ຄໍາສະເໜີ ຂອງອົງການໄອຍະການທະຫານ ກ່ຽວກັບການລະເມີດກົດໝາຍ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງໄດ້ຮັບພິຈາລະນາ ແລະ ແກ້ໄຂ ຢ່າງຊ້າບໍ່ໃຫ້ເກີນ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້

ຮັບຄຳສະເໜີເປັນຕົ້ນໄປ, ຖ້າເກີນກຳນົດເວລາດັ່ງກ່າວ ອົງການໄອຍະການທະຫານ ຕ້ອງສະເໜີຕໍ່ຂັ້ນເທິງ ຫຼື ການຈັດຕັ້ງ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອພິຈາລະນາ ແລະ ແກ້ໄຂ.

## ໝວດທີ 2
## ການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ທະຫານ

### ມາດຕາ 37 (ປັບປຸງ) ການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ

ການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ ແມ່ນ ການຕິດຕາມກວດກາການປະຕິບັດກົດໝາຍ ໃນຂັ້ນຕອນການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານ ໃຫ້ຖືກຕ້ອງ, ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ເພື່ອ:

1. ຊອກໃຫ້ເຫັນສະພາບການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ ມີຄວາມຖືກຕ້ອງ ຫຼື ມີການລະເມີດກົດໝາຍ;

2. ຊອກຮູ້ການນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ເຊັ່ນ ການກວດຄົ້ນເຄຫະສະຖານ, ການກັກຕົວ, ການຈັບຕົວ, ການກັກຂັງພາງ, ການປ່ອຍຕົວພາງ ຜູ້ຖືກຫາ ໄດ້ປະຕິບັດຖືກຕ້ອງຕາມກົດໝາຍ ຫຼື ມີການລະເມີດກົດໝາຍ;

3. ໃຫ້ອົງການສືບສວນ-ສອບສວນ ປະຕິບັດກົດໝາຍ ກ່ຽວກັບການດຳເນີນຄະດີອາຍາຢ່າງເຂັ້ມງວດ;

4. ກວດກາ ການອອກ ຫຼື ບໍ່ອອກ ຄຳສັ່ງເປີດການສືບສວນ-ສອບສວນ ຂອງຫົວໜ້າອົງການສືບສວນ-ສອບສວນ ມີ ຫຼື ບໍ່ມີ ຫຼັກຖານ ແລະ ຖືກຕ້ອງ ຫຼື ບໍ່ຖືກຕ້ອງ ຕາມກົດໝາຍ;

5. ຄົ້ນຄວ້າ, ຊອກໃຫ້ເຫັນທຸກການກະທຳຜິດທີ່ເກີດຂຶ້ນ ແລະ ບໍ່ໃຫ້ຜູ້ກະທຳຜິດພົ້ນຈາກການລົງໂທດ ຕາມກົດໝາຍ;

6. ຊອກໃຫ້ເຫັນສາເຫດ ແລະ ເງື່ອນໄຂຂອງການກະທຳຜິດ ເພື່ອວາງມາດຕະການແກ້ໄຂ.

### ມາດຕາ 38 ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານ ໃນການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສອບ-ສອບສວນ

ໃນການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ທະຫານ ອົງການໄອຍະການທະຫານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ທວງເອົາສຳນວນຄະດີອາຍາ, ເອກະສານ, ຂອງກາງ ແລະ ຂໍ້ມູນອື່ນ ກ່ຽວກັບການກະທຳຜິດຈາກອົງການສືບສວນ-ສອບສວນ;

2. ອອກຄຳສັ່ງເປີດການສືບສວນ-ສອບສວນ ໃນກໍລະນີບໍ່ທັນມີຄຳສັ່ງເປີດການສືບສວນ-ສອບສວນ ຂອງອົງການສືບສວນ-ສອບສວນ;

3. ເຂົ້າຮ່ວມໃນການສືບສວນ-ສອບສວນຄະດີອາຍາ, ໃນກໍລະນີຈຳເປັນຈະດຳເນີນການສືບສວນ-ສອບສວນດ້ວຍຕົນເອງກໍໄດ້;

4. ກວດກາການປະຕິບັດຄຳສັ່ງ ແລະ ລຶບລ້າງຄຳສັ່ງ ຂອງອົງການສືບສວນ-ສອບສວນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຫຼື ບໍ່ມີເຫດຜົນໜັກແໜ້ນ;

5. ໃຫ້ຄຳແນະນຳເປັນລາຍລັກອັກສອນ ກ່ຽວກັບການສືບສວນ-ສອບສວນຄະດີອາຍາ, ການສະກັດກັ້ນ ການຕ້ານອາຊະຍາກຳ, ການຕີຄວາມໝາຍຂອງການກະທຳຜິດ, ການນຳໃຊ້ວິທີການສືບສວນ-ສອບສວນ ແລະ ການຊອກຫາຜູ້ກະທຳຜິດ;

6. ຕໍ່ກຳນົດເວລາສືບສວນ-ສອບສວນ ແລະ ກຳນົດເວລາກັກຂັງພາງ ຕາມການສະເໜີຂອງຫົວໜ້າອົງການສືບສວນ-ສອບສວນ ແລະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

7. ສົ່ງສຳນວນຄະດີຄືນ ໃຫ້ອົງການສືບສວນ-ສອບສວນ ພ້ອມກັບຄຳແນະນຳ ກ່ຽວກັບການສືບສວນ-ສອບສວນເພີ່ມເຕີມ;

8. ສັ່ງໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນທີ່ລະເມີດກົດໝາຍ ກ່ຽວກັບການດຳເນີນຄະດີຢຸດເຊົາການສືບສວນ-ສອບສວນ;

9. ອອກຄຳສັ່ງຊັດມ້ຽນຄະດີ ຫຼື ໂຈະການດຳເນີນຄະດີ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 39 (ປັບປຸງ) ຜົນບັງຄັບປະຕິບັດນິຕິກຳ ຂອງອົງການໄອຍະການທະຫານ ຕໍ່ອົງການສືບສວນ-ສອບສວນ**

ນິຕິກຳ ຂອງອົງການໄອຍະການທະຫານ ມີຜົນບັງຄັບປະຕິບັດ ສຳລັບ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານ.

## ໝວດທີ 3
## ການສັ່ງຟ້ອງຂຶ້ນສານ

**ມາດຕາ 40 ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ**

ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແມ່ນ ການອອກຄຳສັ່ງຂອງຫົວໜ້າອົງການໄອຍະການທະຫານ ຊຶ່ງຕັ້ງຂໍ້ກ່າວຫາໃສ່ຜູ້ຖືກຫາ ພ້ອມທັງສົ່ງສຳນວນຄະດີ, ຜູ້ຖືກຫາ ແລະ ຂອງກາງຄະດີ ໃຫ້ສານທະຫານພິຈາລະນາຕັດສິນ ຕາມກົດໝາຍ.

ມີແຕ່ອົງການໄອຍະການທະຫານເທົ່ານັ້ນ ມີສິດສັ່ງຟ້ອງຜູ້ຖືກຫາ ຂຶ້ນສານທະຫານ.

ອົງການໄອຍະການທະຫານ ເປັນຜູ້ຕາງໜ້າລັດ ແລະ ເປັນໂຈດໃນຄະດີອາຍາ.

ສຳລັບຂັ້ນຕອນການສັ່ງຟ້ອງຜູ້ຖືກຫາຂຶ້ນສານທະຫານ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ມາດຕາ 41 (ປັບປຸງ) ການສັ່ງຟ້ອງ ແລະ ການຖະແຫຼງຂຶ້ນສານ**

ກ່ອນການສັ່ງຟ້ອງຜູ້ຖືກຫາ ແລະ ການຖະແຫຼງຂຶ້ນສານທະຫານນັ້ນ ຫົວໜ້າອົງການໄອຍະການທະຫານຕ້ອງຄົ້ນຄວ້າສຳນວນຄະດີ ຢ່າງ ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ, ຮັບປະກັນໃຫ້ມີຫຼັກຖານຮັດກຸມ, ໜັກແໜ້ນ ເພື່ອຢັ້ງຢືນຄຳສັ່ງຟ້ອງ ແລະ ຄຳຖະແຫຼງຂອງຕົນຕໍ່ສານທະຫານ.

ຫ້ອງການໄອຍະການທະຫານ ອາດດຳເນີນການສັ່ງຟ້ອງຜູ້ຖືກຫາຂຶ້ນສານໂດຍກົງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ຄຳສັ່ງຟ້ອງ ຂອງຫ້ອງການໄອຍະການທະຫານ ຕ້ອງແຈ້ງໃຫ້ຜູ້ຖືກຫາຊາບຢ່າງໜ້ອຍ ສາມວັນລັດຖະການ ກ່ອນສົ່ງສຳນວນຄະດີໃຫ້ສານທະຫານພິຈາລະນາ.

## ໝວດທີ 4
## ການຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີອາຍາຢູ່ສານທະຫານ

### ມາດຕາ 42 ການຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີອາຍາຢູ່ສານທະຫານ

ການຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີອາຍາຢູ່ສານທະຫານ ມີຈຸດປະສົງເຮັດໃຫ້ການດຳເນີນຄະດີອາຍາ ຖືກຕ້ອງ, ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ເຮັດໃຫ້ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ຂອງສານທະຫານ ມີເຫດຜົນໜັກແໜ້ນ ແລະ ໄດ້ຮັບການປະຕິບັດຢ່າງຖືກຕ້ອງ ແລະ ຍຸຕິທຳ.

### ມາດຕາ 43 ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານ ໃນການຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີອາຍາຢູ່ສານທະຫານ

ໃນການຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີອາຍາຢູ່ສານທະຫານ ອົງການໄອຍະການທະຫານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສະເໜີໃຫ້ສານທະຫານ ສົ່ງສຳນວນຄະດີ, ຄຳຕັດສິນ ຫຼື ຄຳພິພາກສາ ໃຫ້ຕົນ;
2. ຕິດຕາມກວດກາການໄກ່ເກ່ຍຄະດີແພ່ງ ເພື່ອປົກປ້ອງຜົນປະໂຫຍດຂອງ ກອງທັບ, ນາຍ ແລະ ພົນທະຫານ, ກຳມະກອນ ແລະ ພະລະກອນປ້ອງກັນຊາດ;
3. ເຂົ້າຮ່ວມໃນການດຳເນີນຄະດີອາຍາຢູ່ທີ່ປະຊຸມສານ ແລະ ຖະແຫຼງຕໍ່ສານທະຫານ;
4. ທວງເອົາ ແລະ ກວດກາການປະຕິບັດ ຄຳຕັດສິນ, ຄຳພິພາກສາ ຂອງສານທະຫານ;
5. ສະເໜີຄັດຄ້ານ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ຄະດີອາຍາ ທີ່ຍັງບໍ່ທັນໃຊ້ໄດ້ຢ່າງເດັດຂາດຂອງສານທະຫານຂັ້ນຂອງຕົນ ທີ່ເຫັນວ່າບໍ່ມີເຫດຜົນໜັກແໜ້ນ ຫຼື ບໍ່ຖືກຕ້ອງ ຕາມກົດໝາຍ;
6. ຖອນຄຳສະເໜີຄັດຄ້ານຂອງຕົນ ກ່ອນສານຕັດສິນ;
7. ນຳສະເໜີຄຳຮ້ອງຂໍຣື້ຟື້ນຄະດີ ໃນກໍລະນີພົບເຫັນຂໍ້ມູນ ຫຼື ຫຼັກຖານໃໝ່;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 5

## ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານທະຫານ

### ມາດຕາ 44 ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານທະຫານ

ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານທະຫານ ແມ່ນ ການຕິດຕາມກວດກາການປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານທະຫານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 45 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານໃນການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານທະຫານ

ໃນການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານທະຫານ ອົງການໄອຍະການທະຫານ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໄດ້ຮັບສຳເນົາ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານທະຫານ ທີ່ສະເໜີໃຫ້ປະຕິບັດ;

2. ສະເໜີໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານທະຫານ:

- ລາຍງານສະພາບ ການປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານທະຫານ;
- ປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານທະຫານ ທີ່ໃຊ້ໄດ້ຢ່າງເດັດຂາດ ຊຶ່ງຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດ;
- ລາຍງານການປະຕິບັດໂທດທາງອາຍາ ແລະ ການໃຊ້ແທນທາງແພ່ງ.

3. ກວດກາຄວາມຖືກຕ້ອງ ຂອງການປະຕິບັດຄຳຕັດສິນຂອງສານທະຫານ ເປັນຕົ້ນ ການຊຳລະທາງແພ່ງ, ຄ່າປັບໃໝ, ການຮິບຊັບ ແລະ ການຮິບວັດຖຸສິ່ງຂອງເປັນຂອງລັດ, ການປະຕິບັດໂທດທາງອາຍາ;

4. ສະເໜີປ່ຽນແປງ, ລົບລ້າງ ຫຼື ໂຈະການປະຕິບັດ ທີ່ບໍ່ຖືກຕ້ອງຕາມ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານທະຫານ.

### ມາດຕາ 46 (ປັບປຸງ) ຜົນບັງຄັບປະຕິບັດນິຕິກຳຂອງອົງການໄອຍະການທະຫານ ສຳລັບພະນັກງານປະຕິບັດຄຳຕັດສິນຂອງສານທະຫານ

ນິຕິກຳຂອງອົງການໄອຍະການທະຫານ ທີ່ຖືກຕ້ອງຕາມກົດໝາຍ ມີຜົນບັງຄັບປະຕິບັດ ສຳລັບພະນັກງານປະຕິບັດຄຳຕັດສິນຂອງສານທະຫານ.

ພະນັກງານປະຕິບັດຄຳຕັດສິນຂອງສານທະຫານ ຕ້ອງຈັດຕັ້ງປະຕິບັດຄຳສະເໜີຂອງອົງການໄອຍະການທະຫານ ພາຍໃນເວລາ ສາມສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ.

ຂັ້ນຕອນການຈັດຕັ້ງປະຕິບັດນິຕິກຳດັ່ງກ່າວ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ.

## ໝວດທີ 6
## ການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ ແລະ ຄ້າຍຄຸມຂັງ-ດັດສ້າງ

**ມາດຕາ 47 ການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ ແລະ ຄ້າຍຄຸມຂັງ-ດັດສ້າງ**

ການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍຄຸມຂັງ-ດັດສ້າງ ມີຈຸດປະສົງ ເພື່ອປະຕິບັດໃຫ້ຖືກຕ້ອງ ຕາມກົດໝາຍ, ລະບຽບການ ແລະ ເງື່ອນໄຂຂອງການກັກຕົວ, ການກັກຂັງ, ການຄຸມຂັງ-ດັດສ້າງ, ການປະຕິບັດໂທດຕັດອິດສະລະພາບ ແລະ ມາດຕະການບັງຄັບອື່ນຂອງສານທະຫານ.

**ມາດຕາ 48 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານໃນການຕິດຕາມກວດກາ ສະຖານທີ່ກັກຕົວ, ສະຖານທີ່ກັກຂັງ ແລະ ຄ້າຍຄຸມຂັງ-ດັດສ້າງ**

ໃນການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ ແລະ ຄ້າຍຄຸມຂັງ-ດັດສ້າງ ອົງການໄອຍະການທະຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມກວດກາ ການກັກຕົວ, ກັກຂັງ, ການຍົກຍ້າຍ, ການອອກປິ່ນປົວ ແລະ ການປ່ອຍຕົວຜູ້ຖືກສົງໄສ, ຜູ້ຖືກຫາ, ຈຳເລີຍ, ຜູ້ຖືກດັດສ້າງ ຫຼື ນັກໂທດ ປະຕິບັດຖືກຕ້ອງ ຫຼື ບໍ່ຖືກຕ້ອງ ຕາມທີ່ກົດໝາຍໄດ້ກຳນົດໄວ້ ເພື່ອວາງມາດຕະການແກ້ໄຂໃຫ້ທັນການ;

2. ລົງກວດກາ ສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍຄຸມຂັງ-ດັດສ້າງ, ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານທະຫານ ຢ່າງເປັນລະບົບ ຫຼື ໃນເວລາໃດກໍໄດ້;

3. ກວດກາເອກະສານ ກ່ຽວກັບ ການກັກຕົວ, ການຈັບຕົວ, ການກັກຂັງ, ການປ່ອຍຕົວ, ການດັດສ້າງ ແລະ ການປະຕິບັດມາດຕະການບັງຄັບອື່ນຂອງສານທະຫານ;

4. ກວດກາ ຄຸ້ມຄອງ ຜູ້ຖືກກັກຕົວ, ກັກຂັງ, ດັດສ້າງ ແລະ ປະຕິບັດຕາມມາດຕະການບັງຄັບອື່ນຂອງສານທະຫານ ພ້ອມທັງສອບຖາມບຸກຄົນດັ່ງກ່າວ;

5. ກວດກາພຶດຕິກຳຂອງເຈົ້າໜ້າທີ່ຕໍ່ບຸກຄົນ ທີ່ຖືກ ກັກຕົວ, ຈັບຕົວ, ກັກຂັງ, ດັດສ້າງ ແລະ ປະຕິບັດມາດຕະການບັງຄັບອື່ນຂອງສານທະຫານ ໃນກໍລະນີພົບເຫັນພຶດຕິກຳຂອງເຈົ້າໜ້າທີ່ ເປັນການລະເມີດກົດໝາຍ ຕ້ອງຕັກເຕືອນ, ຖ້າພຶດຕິກຳຫາກເປັນການກະທຳຜິດທາງອາຍາ ກໍຕ້ອງດຳເນີນຄະດີຕາມກົດໝາຍ;

6. ສັ່ງໃຫ້ປ່ອຍຕົວໃນທັນໃດ ບຸກຄົນ ທີ່ຖືກ ກັກຕົວ, ຈັບຕົວ, ກັກຂັງ, ດັດສ້າງ ຫຼື ປະຕິບັດຕາມມາດຕະການບັງຄັບອື່ນຂອງສານທະຫານ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

7. ເຂົ້າຮ່ວມຄົ້ນຄວ້າ ພິຈາລະນາຄັດເລືອກ ຈັດແບ່ງປະເພດ ແລະ ເຮັດບັນຊີນັກໂທດ ທີ່ມີເງື່ອນໄຂໄດ້ຮັບການອະໄພຍະໂທດ ແລະ ກວດກາການຈັດຕັ້ງປະຕິບັດການໃຫ້ອະໄພຍະໂທດ ຕາມລັດຖະບັນຍັດຂອງປະທານປະເທດ;

8. ກວດກາບັນຊີລາຍຊື່ ຜູ້ຖືກຫາ, ຈຳເລີຍ, ຜູ້ຖືກດັດສ້າງ ຫຼື ນັກໂທດ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍຄຸມຂັງ-ດັດສ້າງ, ຜູ້ໄດ້ຮັບອະນຸຍາດປິ່ນປົວ ຫຼື ນັກໂທດ ທີ່ໄດ້ຮັບອະນຸຍາດໃຫ້ຍົກຍ້າຍ ຈາກບ່ອນໜຶ່ງໄປປະຕິບັດໂທດຢູ່ບ່ອນອື່ນ;

9. ກວດກາຄຳສັ່ງ ແລະ ລະບຽບການຕ່າງໆ ຂອງຫົວໜ້າຮັບຜິດຊອບ ສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍຄຸມຂັງ-ດັດສ້າງ ໃຫ້ສອດຄ່ອງກັບກົດໝາຍ ແລະ ໃຫ້ຫົວໜ້າຮັບຜິດຊອບດັ່ງກ່າວ ອະທິບາຍເຫດຜົນການລະເມີດກົດໝາຍ. ຫົວໜ້າຮັບຜິດຊອບ ສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍຄຸມຂັງ-ດັດສ້າງ ຕ້ອງປະຕິບັດຄຳສັ່ງຂອງຫົວໜ້າອົງການໄອຍະການທະຫານ ກ່ຽວກັບການ ກັກຕົວ, ກັກຂັງ, ດັດສ້າງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 49 ຄວາມຮັບຜິດຊອບໃນການສົ່ງຄຳຮ້ອງທຸກ ຂອງຜູ້ຖືກຫາ, ຈຳເລີຍ, ຜູ້ຖືກດັດສ້າງ ແລະ ນັກໂທດ**

ຄະນະຮັບຜິດຊອບສະຖານທີ່ກັກຕົວ, ສະຖານທີ່ກັກຂັງ ແລະ ຄ້າຍຄຸມຂັງ-ດັດສ້າງ ຕ້ອງສົ່ງຄຳຮ້ອງທຸກຂອງຜູ້ຖືກຫາ, ຈຳເລີຍ, ຜູ້ຖືກດັດສ້າງ ແລະ ນັກໂທດ ໃຫ້ອົງການໄອຍະການທະຫານ ພາຍໃນເວລາ ສີ່ສິບແປດຊົ່ວໂມງ ນັບແຕ່ເວລາໄດ້ຮັບຄຳຮ້ອງເປັນຕົ້ນໄປ.

**ມາດຕາ 50 ຜົນບັງຄັບປະຕິບັດນິຕິກຳຂອງອົງການໄອຍະການທະຫານ ສຳລັບເຈົ້າໜ້າທີ່ ສະຖານທີ່ກັກຕົວ, ສະຖານທີ່ກັກຂັງ ແລະ ຄ້າຍຄຸມຂັງ-ດັດສ້າງ**

ນິຕິກຳຂອງອົງການໄອຍະການທະຫານທີ່ຖືກຕ້ອງຕາມກົດໝາຍ ມີຜົນບັງຄັບປະຕິບັດ ສຳລັບເຈົ້າໜ້າທີ່ຮັບຜິດຊອບ ສະຖານທີ່ກັກຕົວ, ສະຖານທີ່ກັກຂັງ ແລະ ຄ້າຍຄຸມຂັງ-ດັດສ້າງ ຂອງກອງທັບ.

## ພາກທີ IV
## ລະບອບວິທີເຮັດວຽກ

**ມາດຕາ 51 ລະບອບເຮັດວຽກ**

ອົງການໄອຍະການທະຫານ ເປັນລະບົບເອກະພາບ ແລະ ລວມສູນ, ນຳພາໂດຍຫົວໜ້າອົງການໄອຍະການທະຫານຂັ້ນສູງ, ຫົວໜ້າອົງການໄອຍະການທະຫານຂັ້ນລຸ່ມ ຂຶ້ນກັບຫົວໜ້າອົງການໄອຍະການທະຫານຂັ້ນເທິງ. ໃນເວລາປະຕິບັດໜ້າທີ່ຂອງຕົນນັ້ນ ຫົວໜ້າອົງການໄອຍະການທະຫານຂັ້ນລຸ່ມ ຕ້ອງປະຕິບັດຕາມກົດໝາຍ, ຄຳສັ່ງຂອງຫົວໜ້າອົງການໄອຍະການທະຫານຂັ້ນສູງ ແລະ ປະຕິບັດລະບອບຫົວໜ້າຕາມສາຍຕັ້ງ ແລະ ສາຍຂວາງ.

ອົງການໄອຍະການທະຫານ ປະຕິບັດໜ້າທີ່ບົນພື້ນຖານຫຼັກການນິຕິທຳ ຮັບປະກັນການປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ.

**ມາດຕາ 52 ວິທີເຮັດວຽກ**

ອົງການໄອຍະການທະຫານ ດຳເນີນວຽກງານຂອງຕົນ ໂດຍມີແຜນການ, ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງວຽກງານໃຫ້ບຸກຄົນຮັບຜິດຊອບ, ມີການກວດກາ, ປະຕິບັດລະບອບປະຊຸມ, ສ່ອງແສງ ລາຍງານ, ຂໍຄຳເຫັນຊີ້ນຳຈາກຂັ້ນເທິງຂອງຕົນ, ສະຫຼຸບ ຖອດຖອນ ບົດຮຽນ ແລະ ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ.

## ພາກທີ V
## ຂໍ້ຫ້າມ

**ມາດຕາ 53 ຂໍ້ຫ້າມສຳລັບ ພະນັກງານອົງການໄອຍະການທະຫານ**

ຫ້າມ ພະນັກງານອົງການໄອຍະການທະຫານ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຕຳແໜ່ງ, ໜ້າທີ່, ສິດອຳນາດ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ຍາດພີ່ນ້ອງ;
2. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ເກີນຂອບເຂດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
3. ບັງຄັບ ແລະ ນາບຂູ່ ຜູ້ຖືກຫາ, ຈຳເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ;
4. ເມີນເສີຍຕໍ່ໜ້າທີ່, ບິດເບືອນຄວາມຈິງ, ປົກບັງ, ປົກປ້ອງ ຜູ້ຖືກຫາ, ຈຳເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ;
5. ກັກສຳນວນຄະດີ, ກົດໜ່ວງ ຖ່ວງດຶງເອກະສານ ເພື່ອຫາຜົນປະໂຫຍດຈາກການດຳເນີນຄະດີ;
6. ທວງ, ຮຽກ, ຮັບເອົາສິນບົນຈາກ ຄູ່ຄວາມ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
7. ພົວພັນກັບຜູ້ຖືກຫາ, ຈຳເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ ເພື່ອຫາຜົນປະໂຫຍດ;
8. ປົກບັງ, ຊຸກເຊື່ອງ ເອກະສານ, ຫຼັກຖານທີ່ມີຢູ່ໃນສຳນວນຄະດີ, ນຳໃຊ້, ເຮັດເປ່ເພ, ເສຍຫາຍ, ສັບປ່ຽນ ຂອງກາງຄະດີ;
9. ເປີດເຜີຍຄວາມລັບຂອງລັດ ຫຼື ຄວາມລັບທາງການທະຫານ;
10. ຄອບຄອງ, ນຳໃຊ້ ອາວຸດ ຫຼື ວັດຖຸລະເບີດ ໂດຍບໍ່ໄດ້ຮັບອະນຸຍາດ;
11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 54 ຂໍ້ຫ້າມສຳລັບ ຜູ້ເຂົ້າຮ່ວມໃນການດຳເນີນຄະດີ**

ຫ້າມ ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ມີພຶດຕິກຳ ດັ່ງນີ້:

1. ຂັດຂວາງ, ສ້າງຄວາມຫຍຸ້ງຍາກ, ນາບຂູ່ ພະນັກງານອົງການໄອຍະການທະຫານ, ຜູ້ສະໜອງຂໍ້ມູນຫຼັກຖານ ໃຫ້ແກ່ການດຳເນີນຄະດີ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງ;
2. ລາຍງານ, ສະໜອງຂໍ້ມູນຫຼັກຖານບໍ່ຖືກກັບຄວາມຈິງ, ຊຸກເຊື່ອງ, ທຳລາຍເອກະສານ, ວັດຖຸສິ່ງຂອງທີ່ເປັນຂອງກາງຄະດີ;
3. ປະຕິເສດການສະໜອງຂໍ້ມູນຫຼັກຖານກ່ຽວກັບຄະດີ;

4. ໃຫ້ສິນບົນພະນັກງານອົງການໄອຍະການທະຫານ, ພະຍານ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງ;

5. ໝິ່ນປະໝາດ, ໃສ່ຮ້າຍ ພະນັກງານອົງການໄອຍະການທະຫານ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 55 (ປັບປຸງ) ຂໍ້ຫ້າມສຳລັບ ນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມ ນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ກັກຕົວ, ຈັບຕົວ, ກັກຂັງ, ປ່ອຍຕົວ, ກວດຄົ້ນເຄຫະສະຖານ ໂດຍບໍ່ມີຄຳສັ່ງຂອງອົງການໄອຍະການທະຫານ ຫຼື ສານທະຫານ;

2. ແຊກແຊງ, ກ້າວກ່າຍ ແລະ ຂັດຂວາງການປະຕິບັດໜ້າທີ່ ຂອງພະນັກງານອົງການໄອຍະການທະຫານ;

3. ປົກປິດ, ເຊື່ອງອຳ ຫຼື ທຳລາຍຂໍ້ມູນ, ຫຼັກຖານ ແລະ ຂອງກາງ ກ່ຽວກັບຄະດີ;

4. ນາບຂູ່ ຫຼື ທຳຮ້າຍ ພະນັກງານອົງການໄອຍະການທະຫານ, ພະຍານ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງກັບຄະດີ;

5. ປົກປິດ ຜູ້ຖືກສົງໄສ, ຜູ້ຖືກຫາ, ຈຳເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ;

6. ໃຫ້ສິນບົນພະນັກງານອົງການໄອຍະການທະຫານ;

7. ໝິ່ນປະໝາດ, ໃສ່ຮ້າຍ ພະນັກງານອົງການໄອຍະການທະຫານ;

8. ນຳໃຊ້, ເຮັດເປ່ເພ, ເສຍຫາຍ, ສັບປ່ຽນ ຂອງກາງຄະດີ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VI
## ການຕິດຕາມກວດກາອົງການໄອຍະການທະຫານ

**ມາດຕາ 56 (ປັບປຸງ) ການຕິດຕາມກວດກາອົງການໄອຍະການທະຫານ**

ການຕິດຕາມກວດກາອົງການໄອຍະການທະຫານ ມີ ດັ່ງນີ້:

1. ການຕິດຕາມກວດກາພາຍໃນ ຊຶ່ງແມ່ນ ກະຊວງປ້ອງກັນປະເທດ ແລະ ອົງການໄອຍະການປະຊາຊົນສູງສຸດ ກວດກາອົງການໄອຍະການທະຫານທຸກຂັ້ນ; ອົງການໄອຍະການທະຫານຂັ້ນສູງ ກວດກາອົງການໄອຍະການທະຫານຂັ້ນລຸ່ມ;

2. ການຕິດຕາມກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

**ມາດຕາ 57 ເນື້ອໃນການຕິດຕາມກວດກາ**

ການຕິດຕາມກວດກາ ມີເນື້ອໃນ ດັ່ງນີ້:

1. ຕິດຕາມກວດກາການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານ;

2. ຕິດຕາມກວດກາການປະຕິບັດກົດໝາຍຂອງອົງການໄອຍະການທະຫານ ເປັນຕົ້ນ ການນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ;

3. ຕິດຕາມກວດກາດ້ານການຈັດຕັ້ງ, ບຸກຄະລະກອນ, ງົບປະມານ ແລະ ພາຫະນະຮັບໃຊ້;

4. ຕິດຕາມກວດກາການປະຕິບັດນະໂຍບາຍ ແລະ ມາດຕະການ ຕໍ່ພະນັກງານອົງການໄອຍະການທະຫານ.

**ມາດຕາ 58 ຮູບການການຕິດຕາມກວດກາ**

ການຕິດຕາມກວດກາອົງການໄອຍະການທະຫານ ມີ ສາມຮູບການ ດັ່ງນີ້:

1. ຕິດຕາມການກວດກາຕາມແຜນການປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ຕິດຕາມການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ;

3. ຕິດຕາມການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ສຳລັບ ການດຳເນີນການຕິດຕາມກວດການັ້ນ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ.

## ພາກທີ VII
## ວັນສ້າງຕັ້ງ, ກາໝາຍ, ບັດປະຈຳການ, ຕາປະທັບ ແລະ ງົບປະມານ ຂອງອົງການໄອຍະການທະຫານ

**ມາດຕາ 59 ວັນສ້າງຕັ້ງອົງການໄອຍະການທະຫານ**

ວັນສ້າງຕັ້ງອົງການໄອຍະການທະຫານ ແມ່ນ ວັນທີ 28 ກັນຍາ 1993. ໃນແຕ່ລະປີ ທັງສູນກາງ ແລະ ທ້ອງຖິ່ນ ຈັດຕັ້ງສະເຫຼີມສະຫຼອງວັນດັ່ງກ່າວ ດ້ວຍຮູບການຕ່າງໆ ທີ່ເໝາະສົມ.

**ມາດຕາ 60 (ປັບປຸງ) ກາໝາຍ ແລະ ບັດປະຈຳການ ຂອງອົງການໄອຍະການທະຫານ**

ກາໝາຍຂອງອົງການໄອຍະການທະຫານ ແມ່ນ ຄະນະປະຈຳສະພາແຫ່ງຊາດເປັນຜູ້ຕົກລົງ ຕາມການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ພາຍຫຼັງໄດ້ຮັບຄຳສະເໜີຂອງຫົວໜ້າອົງການໄອຍະການທະຫານຂັ້ນສູງ ແລະ ການຕົກລົງເຫັນດີຂອງລັດຖະມົນຕີກະຊວງປ້ອງກັນປະເທດ.

ບັດປະຈຳການ ຂອງພະນັກງານໄອຍະການທະຫານ ແລະ ຜູ້ຊ່ວຍພະນັກງານໄອຍະການທະຫານ ແມ່ນ ຫົວໜ້າອົງການໄອຍະການທະຫານຂັ້ນສູງ ເປັນຜູ້ອອກໃຫ້.

ມາດຕາ 61 (ປັບປຸງ) ຕາປະທັບຂອງອົງການໄອຍະການທະຫານ

ຕາປະທັບຂອງອົງການໄອຍະການທະຫານຂັ້ນສູງ, ອົງການໄອຍະການທະຫານພາກ, ອົງການໄອຍະການທະຫານ ແຂວງ, ນະຄອນຫຼວງ ເປັນຮູບວົງມົນ ຢູ່ເຄິ່ງກາງວົງມົນມີເຄື່ອງໝາຍຂອງກອງທັບ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ ກະຊວງປ້ອງກັນປະເທດ, ເບື້ອງລຸ່ມຂຽນຊື່ອົງການໄອຍະການທະຫານຂັ້ນຂອງຕົນ ຊຶ່ງຂັ້ນດ້ວຍຮູບດາວ ຫ້າແຈ.

ມາດຕາ 62 (ປັບປຸງ) ງົບປະມານຂອງອົງການໄອຍະການທະຫານ

ງົບປະມານ ຂອງອົງການໄອຍະການທະຫານ ແມ່ນ ຂຶ້ນກັບກະຊວງປ້ອງກັນປະເທດ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 63 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ມາດຕາ 64 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງໄດ້ສ້າງຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ກອງທັບ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງ ນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ ແລະ ກຳລັງປ້ອງກັນຕົວ, ກຳລັງສຳຮອງ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ IX
## ບົດບັນຍັດສຸດທ້າຍ

ມາດຕາ 65 ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ອົງການໄອຍະການປະຊາຊົນສູງສຸດ ແລະ ອົງການໄອຍະການທະຫານ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 66 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ ວັນທີ 20 ກຸມພາ 2023 ພາຍຫຼັງປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍອົງການໄອຍະການທະຫານ ສະບັບເລກທີ 37/ສພຊ, ລົງວັນທີ 16 ທັນວາ 2013.

ປະທານສະພາແຫ່ງຊາດ

**ປອ ໄຊສົມພອນ ພົມວິຫານ**